# ຂ່າວກອງປະຊຸມພັດທະນາ ແລະ ປັບປຸງເວັບໄຊ ຂອງ ສ.ວ.ສ

ກອງປະຊຸມພັດທະນາ ແລະ ປັບປຸງເວັບເພື່ອການສຶກສາ ຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເຊິ່ງຈັດຂຶ້ນໃນວັນທີ 18-20 ຕຸລາ 2016 ທີ່ຫ້ອງປະຕິບັດການຄອມພິວເຕີຂອງສູນເຕັກໂນໂລຊີການສຶກສາ ໂດຍການເປັນປະທານ ຂອງທ່ານ ອ່ອນແກ້ວ ນວນນະວົງ ຜູ້ອຳນວຍການ ສະຖາບັນຄົ້ນ ຄວ້າວິທະຍາສາດການສຶກສາ ມີຮອງຜູ້ອຳນວຍການ ສ.ວ.ສ, ຮອງຜູ້ອຳນວຍການສູນ ແລະ ວິຊາການແຕ່ລະສູນ ແຕ່ລະພະແນກ ແຕ່ລະຂະແໜງພາຍໃນ ສ.ວ.ສ ເຂົ້າຮ່ວມ 17 ທ່ານ.

ເນື້ອໃນກອງປະຊຸມໃນຄັ້ງນີ້ ແມ່ນໄດ້ນຳສະເໜີຂໍ້ກຳນົດຂອງກະຊວງໃນການສ້າງເວັບໄຊ, ນຳສະເໜີເວັບໄຊຮູບແບບທີ່ໄດ້ປັບປຸງໃໝ່ ພ້ອມທັງປະກອບຄຳຄິດເຫັນ ແລະ ແນະນຳການເກັບຮັກສາຄວາມປອດໄພຂອງເອກະສານຈາກ Microsoft Word, Microsoft excel, Microsoft PowerPoint, ການຫຍໍ້ຂະໜາດເອກະສານທີ່ເປັນໄຟລນາມສະກຸນ PDF ແລະ ວິດີໂອຕ່າງໆ ທີ່ເປັນໄຟລນາມສະກຸນ MP4 ໃຫ້ມີຂະໜາດນ້ອຍໂດຍຜ່ານໂປຣແກຣມຕ່າງໆ ແບບອອບລາຍ ແລະ ອອນລາຍກ່ອນລົງເວັບໄຊ.

ເນື່ອງໃນໂອກາດນີ້ທ່ານຜູ້ອຳນວຍການ ຍັງໄດ້ໃຫ້ທິດຊີ້ນຳຕໍ່ກອງປະຊຸມ ແລະ ສິ່ງທີ່ຄວນເອົາໃຈໃສ່ ເຊັ່ນ:

- ເພີ່ມຂ່າວເດັ່ນລົງໃນເວັບໄຊ ແລະ ຕ້ອງຢູ່ໜ້າຫຼັກ
- ປັບປຸງເວັບໄຊທີ່ເປັນພາສາອັງກິດໃຫ້ຄົບຖ້ວນ ຍິ່ງເປັນການດີ,
- ປັບປຸງດ້ານຮູບແບບຂອງເວັບໄຊ ໃຫ້ເປັນໜ້າສົນໃຈ ທັນສະໄໝ ເຂົ້າໄດ້ໄວ ດາວໂລດໄວ
- ການປັບປຸງຄວນສຶກສາເບິ່ງເວັບໄຊ ຂອງເພື່ອນບ້ານ ຫຼື ເວັບໄຊຂອງຕ່າງປະເທດ
- ລວມໄປເຖິງການປະສານງານ ຕ້ອງໄດ້ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງຕິດຕາມການເຄື່ອນໄຫວຂອງວຽກງານຕ່າງໆ ທີ່ຈະເອົາມາລົງໃນເວັບໄຊ ເພື່ອຈະໄດ້ອັບເດດຂໍ້ມູນໃຫ້ຖືກຕ້ອງເໝາະສົມ ແລະ ທັນເຫດການຕາມສະພາບຄວາມເປັນຈິງ

ໃນຕອນທ້າຍທ່ານ ຍັງໄດ້ຊົມເຊີຍໃນຮູບໂສມໃໝ່ຂອງເວັບທີ່ມີການປັບປຸງໃໝ່ ແລະ ຈົ່ງສືບຕໍ່ໃຫ້ມີການພັດທະນາຂຶ້ນເລື້ອຍໆ.

ນອກຈາກນັ້ນ ກອງປະຊຸມໄດ້ມີການປຶກສາຫາລືກັນ ມີຄວາມຄິດເຫັນທີ່ເປັນປະໂຫຍດໃນການພັດນາ ແລະ ປັບປຸງ ມີການທົດລອງເຮັດຕົວຢ່າງໃນການຫຍໍ້ເອກະສານ ແລະ ວິດີໂອໃຫ້ມີຂະໜາດຕາມມາດຕະຖານທີ່ຈະລົງເວັບໄຊ ຕາມໂປຣແກຣມທີ່ໄດ້ນຳສະເໜີມາ ການທົດລອງເຮັດຕົວຢ່າງໄດ້ປະສົບຜົນສຳເລັດ ແລະ ເປັນໄປດ້ວຍດີ ກອງປະຊຸມດຳເນີນເປັນເວລາ 3ວັນ ແລະ ປິດລົງຢ່າງຈົບງາມ.

ສ.ຄຸນປະເສີດ